

# ການປ່ຽນແປງໃນເງິນ TANF ແລະກົດກຳນົດ ຂອງເງື່ອນໄຂຮັບເອົາໂຄງການ WorkFirst

**ຣັດວໍຊິງຕັນໄດ້ປ່ຽນແປງກົດລະບຽບສຳລັບການຊ່ວຍເຫລືອຊົ່ວຄາວສຳລັບ ຄອບຄົວຂັດສົນ (TANF) ແລະໂຄງການ WorkFirst.**

ເລີ້ມຕົ້ນຕັ້ງແຕ່ເດືອນຈຸນລາຍ 28, 2019, ຄອບຄົວຈະບໍ່ມີຫມົດສິດຢ່າງຖາວອນ ຕໍ່ໄປອີກແລ້ວຈາກການຊ່ວຍເຫລືອເງິນສິດ TANF ຍ້ອນການຕັດຍ້ອນການບໍ່ປະຕິບັດຕາມໂຄງການ WorkFirst ສາມເທື່ອ. ນອກຈາກນັ້ນອີກ, ຄອບຄົວທີ່ປະເຊີນຫນ້ານຳການບໍ່ມີເຮືອນຢູ່ຈະໄດ້ຮັບເດືອນຮັບການຊ່ວຍເຫລືອຕື່ມອີກ, ກາຍເກີນຂອບເຂດຕະລອດຊີວິດ 60 ເດືອນ (ການຕໍ່ຂອບເຂດເວລາອອກໄປ) .

ສຳລັບການຕໍ່ຂອບເຂດເວລາອອກໄປ, ການເປັນຄົນບໍ່ມີເຮືອນຢູ່ຫມາຍຄວາມວ່າ:

- ການອາສັຍຢູ່ຂ້າງນອກ,
- ການອາສັຍຢູ່ໃນຕຶກອາຄານ ຫລື ສະຖານທີ່ອື່ນໆທີ່ບໍ່ແມ່ນວ່າຈະເປັນບອນຢູ່ອາສັຍຂອງມະນຸດ,
- ການອາສັຍຢູ່ໃນຕຶກອາຄານ ຫລື ສະຖານທີ່ອື່ນໆທີ່ທ່ານບໍ່ມີສິດທາງກົດຫມາຍທີ່ຈະອາສັຍຢູ່ທີ່ນັ້ນ,
- ການອາສັຍຢູ່ໃນບ່ອນພັກເຊົາສຸກເສີນ, ຫລື
- ການອາສັຍຢູ່ໃນໂຄງການເຮືອນຫລວງຊົ່ວຄາວຊຶ່ງອາດຈະລວມເອົາໂຄງການເຮືອນຫລວງຂັ້ນຜົນປ່ຽນ ຫລື ອູ້ມຊູທີ່ມີຣະຍະເວລາອາສັຍຢູ່ທີ່ຈຳກັດ.

ຄອບຄົວຜູ້ທີ່ຖືກຕັດສິດຈາກການຮັບເອົາເງິນຊ່ວຍເຫລືອຍ້ອນ ການຕັດຍ້ອນການບໍ່ປະຕິບັດຕາມໂຄງການ WorkFirst ສາມເທື່ອ, ຫລື ໄດ້ໃຊ້ 60 ເດືອນຫມົດແລ້ວໃນການຊ່ວຍເຫລືອເງິນ TANF ແລະ ກຳລັງປະເຊີນຫນ້າໃນປັດຈຸບັນນີ້ນຳການບໍ່ມີເຮືອນຢູ່, **ອາດຈະມີສິດໄດ້ຮັບການຊ່ວຍເຫລືອເງິນສິດ.**

ເພື່ອຈະຮ້ອງຂໍເອົາການຊ່ວຍເຫລືອເງິນສິດ:

- ໂທຫາສູນກາງຕິດຕໍ່ປະຊາສັມພັນໄດ້ທີ່ເລກ 1-877-501-2233
- ປະກອບໃບຄຳຮ້ອງຂໍໃຫມ່ໄດ້ທີ່ WashingtonConnection.org
- ແວ່ຢ້ຽມຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນ (CSO)

Washington State
Department of Social & Health Services
*Transforming lives*
(8/19) Laotian